PetroTrade
ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 5 0 2 /ປທລ
ວັນທີ: 16/9/2025

ແຈ້ງການ

ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ ("ບໍລິສັດ") ຂໍແຈ້ງມາຍັງຜູ້ຊົມໃຊ້ບໍລິການທີ່ປໍ້າ ພລັສ ແລະ ຜູ້ຮັບຂໍ້ມູນຂ່າວສານຊ່ອງທາງອອນລາຍຂອງບໍລິສັດຜ່ານທາງ Facebook ທົ່ວປະເທດຊາທົ່ວເຖິງກັນວ່າ: ຕອນນີ້ມີກຸ່ມຄົນບໍ່ຫວັງດີ/ມິດສາຊີບ (call center) ໄດ້ສ້າງເຟສບຸກເຟຈ໌ (Facebook Page) ປອມແປງຂຶ້ນ ໂດຍການແອບອ້າງນຳໃຊ້ໂລໂກ້ຂອງບໍລິສັດ ແລະ ໂຄສະນາອ້າງວ່າຈະໄດ້ຮັບສ່ວນຫຼຸດ ຫຼື ຄຸປອງຕື່ມນ້ຳມັນທີ່ປໍ້າ ພລັສ ໂດຍການຫຼອກລວງນີ້ແມ່ນມີໄມຍະສຳຄັນຄື:


ຂັ້ນຕອນທີ່ມິດສາຊີບດຳເນີນການຫຼອກລວງເກັບຂໍ້ມູນ:


- ສົ່ງລິ້ງໃຫ້ເຫຍື່ອ ເພື່ອກວາດຂໍ້ມູນທີ່ສຳຄັນລົງໃນລິ້ງ (link) ທີ່ເກັບຂໍ້ມູນຂອງຄົນທີ່ຕົກເປັນເຫຍື່ອເຊັ່ນ: ຊື່ ແລະ ນາມສະກຸນ, ທີ່ຢູ່, ເບີໂທ ແລະ ເບີ WhatsApp.
- ຫຼັງຈາກສົ່ງຂໍ້ມູນໃນລິ້ງທຳອິດ ແລະ ຂໍ້ມູນສ່ວນຕົວຂອງທ່ານໃຫ້ກັບທາງມິດສາຊີບແລ້ວ, ມິດສາຊີບຈະສົ່ງລິ້ງໃຫ້ເຫຍື່ອເຂົ້າອີກລິ້ງ (link) ໂດຍຈະຕ້ອງໄດ້ສົ່ງຕົວເລກລະຫັດ OTP (One-Time-Password) ທີ່ສົ່ງມາທາງ SMS ຂອງຜູ້ໃຫ້ບໍລິການສັນຍານມືຖື.
- ຖ້າຫາກເຫຍື່ອປະມາດ/ເຫຼີ້ນເຫຼີ ໂດຍກົດສົ່ງເລກ OTP ນີ້ໄປໃນລິ້ງມິດສາຊີບ ເຂົາຈະສາມາດເຂົ້າມາຄວບຄຸມໂທລະສັບມືຖືຂອງເຫຍື່ອ ລວມໄປເຖິງສາມາດເຂົ້າແອບທະນາຄານ ແລະ ແອບອື່ນໆທີ່ສຳຄັນຕ່າງໆ ໃນມືຖືທ່ານ ແລ້ວທຳການແຮັກເພື່ອໂອນເອົາເງິນໃນບັນຊີຂອງທ່ານອອກໄປ.


ຕົວຢ່າງ:



ນອກນີ້ ໃນລຶ້ງຈະມີການທັກເຂົ້າມາທາງ WhatsApp ຂອງເຫຍື່ອ ໂດຍມິດສາຊີບຈະຕົວະຍົວະຫຼອກຫຼວງໃຫ້ລົງທະບຽນໃນລຶ້ງໃໝ່ ແລະ ບອກໃຫ້ສົ່ງ OTP ດັ່ງຕົວຢ່າງຂ້າງລຸ່ມ:







ຄຳແນະນຳ ແລະ ວິທີການປ້ອງກັນ:

- ກົດຕິດຕາມແຕ່ຂໍ້ມູນຂ່າວສານຈາກເຟຈ໌ທາງການຂອງບໍລິສັດທີ່ໄດ້ຮັບການຢືນຢັນຕົວຕົນ ໂດຍຈະມີເຄື່ອງໝາຍຕິກສີຟ້າຢູ່ທ້າຍຊື່ ເຊິ່ງບໍລິສັດກຳລັງດຳເນີນການ ແລະ ຄາດວ່າຈະສຳເລັດໃນໄວໆນີ້.
- ເຟຈ໌ທີ່ແທ້ຈິງ ແລະ ເປັນທາງການຂອງບໍລິສັດ: ມີແຕ່ເຟຈ໌ດຽວນີ້ເທົ່ານັ້ນ.
- **ບໍ່ສົ່ງຕົວເລກລະຫັດ OTP ຂອງຕົນເອງນີ້ໄປໃຫ້ໃຜເດັດຂາດ! ເພາະຕົວເລກລະຫັດ OTP ນີ້ເມື່ອມິດສາຊີບໄດ້ໄປ ເຂົາສາມາດເຂົ້າຄອບຄຸມໂທລະສັບມືຖືຂອງເຫຍື່ອ ເຂົ້າໄປປ່ຽນແປງລະຫັດຜ່ານຂອງແອັບຕ່າງໆ ໃນໂທລະສັບມືຖືເຫຍື່ອ.**
- ໂປຣໂມຊັ່ນ ແລະ ຂໍ້ມູນຂ່າວສານແມ່ນທ່ານສາມາດຕິດຕາມຜ່ານຊ່ອງທາງ:
  1. ເຟຈ໌ເພສບຸກທາງການຂອງພວກເຮົາ https://www.facebook.com/Petrotradelaos
  2. ເວັບໄຊ້: www.petrotradelaos.com
  3. ເວັບໄຊ້ຕະຫຼາດຫຼັກຊັບລາວ: https://shorturl.at/znrdC
  4. ເບີໂທລະສັບສຳນັກງານໃຫຍ່ ປີໂຕຣເທຣດ: 021-264834

ອີກຄັ້ງໜຶ່ງ, ບໍລິສັດ ຂໍຍ້ຳເຕືອນວ່າ ທາງບໍລິສັດຈະບໍ່ມີການຮຽກຮ້ອງ ຫຼື ມີນະໂຍບາຍເອົາຂໍ້ມູນສ່ວນຕົວຂອງຜູ້ຊົມໃຊ້ບໍ່ວ່າໃນຮູບແບບໃດໆ ນອກເສຍຈາກວ່າ ເປັນລູກຄ້າທີ່ລົງທະບຽນເພື່ອສະໝັກບັດເຕີມນ້ຳມັນ Plus Card ເທົ່ານັ້ນ. ຂໍຮຽກຮ້ອງໃຫ້ຜູ້ຊົມໃຊ້ຢ່າໄດ້ຫຼົງເຊື່ອ ໂດຍການໃຫ້ຂໍ້ມູນສ່ວນຕົວດັ່ງກ່າວນີ້ໃຫ້ກັບມິດສາຊີບ. ທຸກກໍລະນີຄວາມເສຍຫາຍທີ່ເກີດຂຶ້ນຈາກຄວາມປະໝາດຂອງລູກຄ້າ ທີ່ໄດ້ໃຫ້ຂໍ້ມູນສ່ວນຕົວກັບມິດສາຊີບດັ່ງກ່າວ ທາງບໍລິສັດຈະບໍ່ໄດ້ຮັບຜິດຊອບຕໍ່ທຸກໆ ກໍລະນີ.

ຂໍຂອບໃຈລູກຄ້າ, ຄູ່ຮ່ວມທຸລະກິດ ແລະ ຜູ້ຊົມໃຊ້ທີ່ ສະຖານີບໍລິການປໍ້າ ພລັສ ເຊິ່ງເປັນທຸລະກິດຂອງຄົນລາວ ດ້ວຍດີສະເໝີມາ.

ຮຽນມາດ້ວຍຄວາມນັບຖື,

ຮອງປະທານສະພາບໍລິຫານ

ຄຳສອນ ສິດທິໄຊ